ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ຄະນະນຳ ທຫລ ເຂົ້າຮ່ວມ ຂະບວນຄາລາວານພິຊິດຈອມພູເບ້ຍ




ໃນວັນທີ 16 ທັນວາ 2020 ທີ່ຜ່ານມານີ້, ຄະນະຮັບຜິດຊອບຊີ້ນຳພັດທະນາເຂດຈຸດສຸມໃຈກາງ ແຂວງ ໄຊສົມບູນ, ຊຶ່ງນຳໂດຍ ທ່ານ ພັນຄຳ ວິພາວັນ ກຳມະການກົມການເມືອງສູນກາງພັກ, ຮອງປະທານປະເທດແຫ່ງ ສປປ ລາວ ແລະ ຄະນະນຳທະນາຄານແຫ່ງ ສປປ ລາວ (ທຫລ) ນຳໂດຍ ທ່ານນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການ ທຫລ ພ້ອມດ້ວຍ ຄະນະນຳອີກຈຳນວນໜຶ່ງ ໄດ້ຮ່ວມ ຂະບວນການຄາລາວານເພື່ອພິຊິດຈອມພູເບ້ຍ ທີ່ແຂວງ ໄຊສົມບູນ ຊຶ່ງເປັນພູທີ່ມີຄວາມສູງທີ່ສຸດໃນປະເທດລາວ ດ້ວຍຄວາມສູງ 2.820 ແມັດ ແລະ ຢູ່ຫ່າງຈາກເທດສະບານແຂວງ ໄຊສົມບູນ ປະມານ 40 ກິໂລແມັດ.

ຂະບວນການຄາລາວານດັ່ງກ່າວ ເປັນຂະບວນການໜຶ່ງທີ່ເປັນການຈັດຕັ້ງປະຕິບັດການພິຊິດຈອມພູເບ້ຍ ຕາມແຜນຂອງຄະນະຊີ້ ນຳພັດທະນາເຂດຈຸດສຸມໃຈກາງ ແລະ ຄະນະນຳຂອງແຂວງ ໄຊສົມບູນ ໄດ້ວາງອອກ, ພ້ອມທັງເປັນການສ້າງບັນຍາກາດ ເພື່ອສົ່ງເສີມ ພັດທະນາທ່າແຮງທາງດ້ານການທ່ອງທ່ຽວ ຊຶ່ງເປັນ 1 ໃນ 5 ຂອງທ່າແຮງທາງດ້ານເສດຖະກິດໃນການພັດທະນາຂອງແຂວງ ໄຊສົມບູນ ກໍ່ຄື: ທ່າແຮງດ້ານກະສິກຳ-ປ່າໄມ້; ທ່າແຮງທາງດ້ານພະລັງງານໄຟຟ້າ; ທ່າແຮງທາງດ້ານພະລັງງານບໍ່ແຮ່; ທ່າແຮງທາງດ້ານການເຊື່ອມ ຈອດ-ເຊື່ອມໂຍງ ແລະ ທ່າແຮງທາງດ້ານການທ່ອງທ່ຽວ ຊຶ່ງໃນນີ້ໄດ້ມີແຜນການພັດທະນາທ່າແຮງໃນດ້ານນີ້ ໃຫ້ເປັນການທ່ອງທ່ຽວ ແບບ ທຳມະຊາດ ຮັກສາສິ່ງແວດລ້ອມ ຕາມທິດການພັດທະນາສີຂຽວ ແລະ ຍືນຍົງ.







# ພາບ: ປາດຖະໜາ ແກ້ວປະເສີດ.
# ຂ່າວ: ວັນປະເສີດ ສິມບູນຂັນ.

ໃຊ້ເງິນກີບທົ່ວທັງຊາດສ້າງບົດບາດຄ່າເງິນກີບລາວ